ບົດຂ່າວປະຈຳເດືອນ
ມິຖຸນາ - ສິງຫາ 2025



# SuPER WE Coffee

## ວຽກເດັ່ນຂອງໂຄງການ
## ມິຖຸນາ - ສິງຫາ 2025

**ມິຖຸນາ:** ໂຄງການ SuPER WE Coffee ຈັດການທັດສະນະແລກປ່ຽນບົດຮຽນ ກ່ຽວກັບການບໍລິຫານຈັດການສະຫະກອນ ທີ່ ສະຫະກອນກາເຟ ຄຳນ້ຳແປ່ງ, ບ້ານນ້ຳແປ່ງ, ເມືອງ ເລົ່າງາມ, ແຂວງ ສາລະວັນ.

**ກໍລະກົດ:** ງານເທດສະການກາເຟ ປະເທດໄທ 2025 ການຮ່ວມວາງສະແດງຜະລິດຕະພັນກາເຟ ຂອງກຸ່ມຜະລິດກາເຟພູດອຍດາກຈຶງ.

**ສິງຫາ:** ໂຄງການ SuperWE Coffee ໄດ້ມອບເຄື່ອງເຮັດກາເຟໃຫ້ແກ່ຊາວກະສິກອນກາເຟຢູ່ເມືອງດາກຈຶງ.

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400 ຊາວສວນກາເຟ**
**280 ແມ່ຍິງຊົນເຜົ່າ**

ທາງອ້ອມ

**4,463 ປະຊາຊົນ**
**2,217 ແມ່ຍິງຊົນເຜົ່າ**

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງ ສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມື ວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ





# ມິຖຸນາ

## ໂຄງການ SuPER WE Coffee ສົ່ງເສີມການປູກກາເຟ ແບບປະສົມປະສານ ໃນສວນຮົ່ມ ໃນ 7 ບ້ານເປົ້າໝາຍ

ໃນລະຫວ່າງວັນທີ 3-6 ມິຖຸນາ 2025 ທີມງານໂຄງການຮ່ວມກັບຄູ່ຮ່ວມງານພາກລັດ ຂັ້ນເມືອງ ໄດ້ລົງຕິດຕາມເກັບກຳຂໍ້ມູນສວນກາເຟ ເພື່ອສະໜອງເບ້ຍໄມ້ໃຫ້ໝາກ ປູກປະສົມໃນສວນກາເຟໃຫ້ຮົ່ມ, ໃນ 7 ບ້ານເປົ້າໝາຍ ຜ່ານການເກັບກຳຂໍ້ມູນສາມາດເກັບຂໍ້ມູນທີ່ກົງຕາມເງື່ອນໄຂກຳນົດໄວ້ ດັ່ງນີ້: ບ້ານດາກວໍ, ດາກວາງ, ດາກຣາຍ, ດາກເດັນ1, ຄູນໄຊ ແລະ ປຣາວ, ຈຳນວນທີ່ສາມາດເກັບໄດ້ຈຳນວນຄອບຄົວທັງໝົດລວມມີ 30 ຄອບຄົວ.

ກິດຈະກຳດັ່ງກ່າວ ແມ່ນແນ່ໃສ່ການປູກກາເຟ ແບບປະສົມປະສານ ເປັນມິດກັບສິ່ງແວດລ້ອມ ຕາມທິດການຄຸ້ມຄອງປ່າ ແລະ ກະສິກຳສີຂຽວ ລວມທັງເພີ່ມປະສິດທິພາບທາງດ້ານ ລົດຊາດຂອງກາເຟ ທີ່ປູກໃນສວນຮົ່ມອີກດ້ວຍ.










## ມິຖຸນາ

### ໂຄງການ SuPER WE Coffee ກອງປະຊຸມປຶກສາຫາລືຜ່ານຮ່າງກົດລະບຽບສະຫະກອນ ແລະ ຮ່າງດຳເນີນງານ

ເພື່ອເປັນການສຸກຍູ້/ ການຫັນເປັນສະຫະກອນກາເຟພູດອຍດາກຈຶງ ທາງໂຄງການ ແລະ ຄູ່ຮ່ວມງານພາກລັດໄດ້ຈັດ ກອງປະຊຸມປຶກສາຫາລື ຜ່ານຮ່າງກົດລະບຽບສະຫະກອນ ແລະ ຮ່າງດຳເນີນງານ (ໃນໄລຍະ 1 ປີ ຫາ 5 ປີ)ໄດ້ຈັດຂຶ້ນຄັ້ງວັນທີ 10-11 ມິຖຸນາ 2025, ເຊິ່ງໄດ້ຈັດຂຶ້ນທີ່ ສະໂມສອນປົກຄອງເມືອງດາກຈຶງ ພາຍໃຕ້ການເປັນປະທານຂອງທ່ານ ອິນແປງ ວິທະນິງສັກ ຫົວໜ້າສູນສົ່ງເສີມເຕັກນິກກະສິກຳ ແລະ ສິ່ງແວດລ້ອມ, ຕາງໜ້າຈາກພະແນກການຄ້າແຂວງ, ຂະ ແໜງປູກຝັງ, ຄະນະປະສານງານອົງການຂັ້ນແຂວງ, ສູນສົ່ງເສີມມາຈາກພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ສະຫະພັນແມ່ຍິງແຂວງ, ຫ້ອງການການຄ້າເມືອງດາກຈຶງ, ສະຫະພັນແມ່ຍິງເມືອງດາກຈຶງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງດາກຈຶງ, ພະນັກງານອົງການແຄຣ໌,ຄະນະລິເລີ່ມກະກຽມສ້າງຕັ້ງສະຫະກອນ, ຕາງໜ້າສະມາຊິກຊາວສວນຈາກກຸ່ມກາເຟດາກຈຶງ, ແລະ ອຳການປົກຄອງບ້ານເປົ້າໝາຍຈາກ 15 ບ້ານ. ລວມມີຜູ້ເຂົ້າຮ່ວມ ທັງໝົດ 29 ທ່ານ, ຍິງ 9 ທ່ານ.

ກອງປະຊຸມປຶກສາຫາລືໃນຄັ້ງນີ້ ໄດ້ສ້າງເງື່ອນໄຂ ການຮຽນຮູ້ກ່ຽວກັບການສ້າງ ແລະ ບໍລິຫານຈັດການສະກອນ ທີ່ດີ ແລະ ຖືກຕ້ອງໃຫ້ກັບຄູ່ຮ່ວມງານ ພາກລັດ ໂດຍສະເພາະ ກໍ່ຄື ຊາວສວນກາເຟພູດອຍດາກຈຶງ ເຖິງບາດກ້າວຕ່າງໆທີ່ຕ້ອງໄດ້ກະກຽມເພື່ອກ້າວເປັນສະຫະກອນເທື່ອລະກ້າວ ແລະ ຜົນປະໂຫຍດຕ່າງໆ ຈາກການເປັນສະຫະກອນ, ພາຍຫຼັງກອງປະຊຸມນີ້ ສັງເກດເຫັນວ່າ ຊາວສວນຈາກ 15 ບ້ານເປົ້າໝາຍຂອງໂຄງການ ມີຄວາມດີໃຈ ແລະ ພ້ອມທີ່ຈະສະໜັບສະໜູນວຽກງານນີ້ ເພື່ອການກ້າວເປັນສະຫະກອນຂອງເຂົາເຈົ້າຢ່າງແທ້ຈິງໃນອານາຄົດຂ້າງໜ້າ ຊຶ່ງເບື້ອງຕົ້ນສາມາດກຳນົດໄດ້ຊື່ ສະຫະກອນຄື: ສະຫະ ກອນກາເຟພູດອຍດາກຈຶງ, ຊື່ຫຍໍ້ (ສກຟຈ) ຊື່ພາສາອັງກິດແມ່ນ “Dakcheug Highland Coffee Cooperative”, ໂຕອັກສອນຫຍໍ້ “DCHC”.






# ມິຖຸນາ

## ໂຄງການ SuPER WE Coffee ໃຫ້ຄວາມສຳຄັນ ແລະ ສົ່ງເສີມການຜະລິດກາເຟແບບຍືນຍົງທີ່ເປັນມິດກັບສິ່ງແວດລ້ອມ

ໃນ ວັນທີ 17 ມິຖຸນາ 2025 ນີ້, ຢູ່ບ້ານດາກວໍ ເມືອງດາກຈຶງ ທີມງານໂຄງການໄດ້ຈັດຝຶກອົບຮົມການສ້າງລະບົບບຳບັດນ້ຳເປື້ອນນຳໃຊ້ຫຍ້າແຝກໃຫ້ແກ່ກຸ່ມຜູ້ຜະລິດກາເຟ.

ການຝຶກອົບຮົມຄັ້ງນີ້ມີຈຸດປະສົງເພື່ອສ້າງຄວາມສາມາດໃຫ້ແກ່ກຸ່ມຜູ້ຜະລິດກາເຟໃນ 15 ບ້ານເປົ້າໝາຍ ໃນການຄຸ້ມຄອງນ້ຳເປື້ອນທີ່ເກີດຈາກຂະບວນການປຸງແຕ່ງກາເຟ, ເຊິ່ງເປັນບາດກ້າວສຳຄັນໃນການຫຼຸດຜ່ອນການປ່ອຍນ້ຳເປື້ອນອອກຈາກສູນ ແລະ ສ້າງສິ່ງແວດລ້ອມທີ່ດີໃນຊຸມຊົນ. ຜູ້ເຂົ້າຮ່ວມໄດ້ຮຽນຮູ້ ແລະ ເຂົ້າໃຈໃນຄວາມສຳຄັນຂອງລະບົບບຳບັດນ້ຳເປື່ອນດັ່ງກ່າວ, ເຊິ່ງເປັນວິທີແກ້ໄຂແບບທຳມະຊາດທີ່ມີຕົ້ນທຶນຕ່ຳ ເພື່ອບຳບັດນ້ຳເປື້ອນກ່ອນທີ່ມັນຈະໄຫຼລົງສູ່ລະບົບນິເວດ.

ນອກຈາກການຊ່ວຍບຳບັດນ້ຳເປື້ອນແລ້ວ, ຫຍ້າແຝກຍັງໃຫ້ຜົນປະໂຫຍດເພີ່ມເຕີມອີກດ້ວຍ ເປັນຕົ້ນ: ປ້ອງກັນການເຊາະເຈື່ອນຂອງດິນ, ໃບຫຍ້າແຝກສາມາດນຳໃຊ້ເປັນອາຫານສັດ, ວັດສະດຸມຸງຫຼັງຄາ ແລະ ເຮັດເຄື່ອງຫັດຖະກຳ ເຊັ່ນ: ສາດ ແລະ ກະຕ່າ.

ທ່ານ ສຳລານ ກາສີຊົງເດດ, ວິຊາການອາວຸໂສ ໂຄງການ SuPER WE Coffee ກ່າວວ່າ ວິທີການນີ້ຊ່ວຍການປູກ ແລະ ການປຸງແຕ່ງກາເຟໃຫ້ເປັນມິດກັບສິ່ງແວດລ້ອມ ໃນຂະນະດຽວກັນກໍ່ສາມາດໃຊ້ເປັນປະໂຫຍດພາຍໃນທ້ອງຖິ່ນ ແລະ ການປົກປ້ອງສິ່ງແວດລ້ອມນຳອີກ.

ກິດຈະກຳນີ້ແມ່ນສ່ວນໜຶ່ງຂອງເປົ້າໝາຍຂອງໂຄງການ ໃນການສົ່ງເສີມການຜະລິດກະສິກຳສີຂຽວ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນຜູ້ປູກກາເຟໃນເມືອງດາກຈຶງ ແຂວງເຊກອງ.





switchasia · Haliéus · 4FORM · coop International Cooperative Alliance Asia and Pacific · ITC · FAIRTRADE



# ມິຖຸນາ

## ໂຄງການ SuPER WE Coffee ສົ່ງເສີມການຜະລິດຝຸ່ນບົ່ມຈາກເປືອກກາເຟ-ມູນສັດ

ທີ່ບ້ານ ດາກວໍ, ເມືອງດາກຈຶງ, ແຂວງເຊກອງ, ໃນວັນທີ 17 ມິຖຸນາ 2025 ຄູຝຶກຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ເຊກອງ ສົມທົບກັບທີມງານວິຊາການຈາກ ອົງການແຄຣ໌ ປະຈຳ ເມືອງ ດາກຈຶງ ແຂວງ ເຊກອງ ໄດ້ຈັດຝຶກອົບຮົມກ່ຽວກັບ ການຜະລິດຝຸ່ນບົ່ມຈາກເປືອກກາເຟ-ມູນສັດ ໃຫ້ແກ່ 15 ບ້ານເປົ້າໝາຍ

ລວມມີຜູ້ເຂົ້າຮ່ວມທັງໝົດ 71 ຄົນ ຍິງ 43 ຄົນ ໃນນັ້ນລວມມີພະນັກງານແຂວງ 1 ທ່ານ ແລະ ເມືອງ 1 ທ່ານ. ການຝຶກອົບຮົມແມ່ນໄດ້ເນັ້ນໃສ່ການຜະລິດຝຸ່ນບົ່ມຈາກເສດເປືອກກາເຟ ແລະ ມູນສັດໃນລະດັບຄົວເຮືອນ.

ຜູ້ເຂົ້າຮ່ວມໄດ້ຮຽນຮູ້ປະໂຫຍດຂອງຝຸ່ນບົ່ມ, ການກະກຽມສະຖານທີ່ ວັດຖຸ ແລະ ອຸປະກອນຕ່າງໆທີ່ຕ້ອງໃຊ້, ວິທີການຜະລິດຝຸ່ນບົ່ມ, ວິທີສັງເກດຝຸ່ນບົ່ມທີ່ສາມາດນຳໄປໃຊ້ໄດ້, ການບັນຈຸ ເກັບຮັກສາ ແລະ ວິທີການນຳໃຊ້ຝຸ່ນບົ່ມໃສ່ກັບຕົ້ນກາເຟ ແລະ ພືດຊະນິດອື່ນໃຫ້ແທດເໝາະກັບສະພາບພື້ນທີ່ຕົວຈິງ ໃນນັ້ນຄູຝຶກໄດ້ສາທິດ ອະທິບາຍຂັ້ນຕອນ ແລະ ວິທີການເຮັດຢ່າງລະອຽດໂດຍໃຫ້ຜູ້ເຂົ້າຮ່ວມເປັນຜູ້ຈັດຕັ້ງປະຕິບັດປະຕິບັດ.





## ໂຄງການ SuPER WE Coffee ສົ່ງເສີມການຄວບຄຸມ ຄຸນນະພາບການຜະລິດ, ເມັດກາເຟ ແລະ ລະບົບການຕິດຕາມຂະບວນການຜະລິດກາເຟ.

ໂຄງການ SuPER WE Coffee ສືບຕໍ່ເອົາໃຈໃສ່ ແລະ ສ້າງບາດກ້າວສໍາຄັນຍົກລະດັບການພັດທະນາຄຸນນະພາບການຜະລິດ ຕະພັນກາເຟ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜະລິດກາເຟພູດອຍດາກຈຶງ. ໃນວັນທີ 17 ມິຖຸນາ 2025 ໂຄງການ SuPER WE Coffee ສົມທົບກັບ ສະມາຄົມກາເຟລາວໄດ້ຈັດຝຶກອົບຮົມການຂົ້ວ ແລະ ຫຼັກການພື້ນຖານຂອງການຊີມກາເຟ ໃຫ້ແກ່ຊາວສວນກາເຟຍິງ 4 ທ່ານ ຈາກກຸ່ມຜະລິດກາເຟພູດອຍດາກຈຶງ ຢູ່ທີ່ຫ້ອງການສະມາຄົມກາເຟລາວ, ເມືອງປາກເຊ, ແຂວງຈໍາປາສັກ.

ການຈັດຝຶກອົບຮົມຄັ້ງນີ້, ໄດ້ສ້າງໃຫ້ ຊາວສວນ ໄດ້ເຂົ້າໃຈເຖິງເຕັກນິກການຂົ້ວ ແລະ ການຊີມກາເຟ ເຊິ່ງເປັນສິ່ງຈໍາເປັນສໍາລັບການຄວບຄຸມຄຸນນະພາບ ແລະ ການແຂ່ງຂັນໃນຕະຫຼາດ. ເຄື່ອງຂົ້ວກາເຟຈະຊ່ວຍໃຫ້ກຸ່ມຜູ້ຜະລິດກາເຟພູດອຍດາກຈຶງ ສາມາດທົດລອງ ແລະ ພັດທະນາລົດຊາດກາເຟ, ລວມທັງເຂົ້າໃຈຄຸນລັກສະນະຂອງເມັດກາເຟຂອງພວກເຂົາເຈົ້າໄດ້ດີຂຶ້ນ, ແລະ ເພີ່ມຄວາມສາມາດໃນການສະໜອງກາເຟຕາມມາດຕະຖານ ແລະ ຄວາມຕ້ອງການຂອງຕະຫຼາດ. ຜ່ານການຝຶກອົບຮົມຜູ້ເຂົ້າຮ່ວມໄດ້ຮຽນຮູ້ກ່ຽວກັບພື້ນຖານຂອງການຂົ້ວກາເຟ, ລວມທັງການຄວບຄຸມອຸນນະພູມ, ລະດັບການຂົ້ວກາເຟ, ແລະ ການສ້າງສູດລົດຊາດ, ພ້ອມກັບຮຽນຮູ້ເຕັກນິກ ແລະ ຫຼັກການພື້ນຖານການຊີມກາເຟ.





switchasia · Haliéus · 4FORM · coop International Cooperative Alliance Asia and Pacific · ITC · FAIRTRADE



## ມິຖຸນາ

### ໂຄງການ SuPER WE Coffee ກອງປະຊຸມວິຊາການປຶກສາຫາລື ແລະ ແລກປ່ຽນ ວຽກງານການສ້າງສະຫະກອນ

ເພື່ອສຸກຍູ້ສົ່ງເສີມການຫັນເປັນ/ສ້າງສະຫະກອນຊາວສວນກາເຟພູດອຍດາກຈຶງ ໃນວັນທີ 19-20 ມິຖຸນາ 2025 ທີ່ເມືອງ ດາກຈຶງ, ໂຄງການໄດ້ຈັດ ກອງປະຊຸມວິຊາການປຶກສາຫາລື ແລະ ແລກປ່ຽນ ວຽກງານການສ້າງສະຫະກອນ ຄັ້ງທີ 4 ຊຶ່ງມີການເຂົ້າຮ່ວມຢ່າງພ້ອມໜ້າຈາກຄູ່ຮ່ວມງານ ທັງພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ສະຫະພັນແມ່ຍິງແຂວງ, ພະແນກການຄ້າ ແລະ ອຸດສະຫະກຳແຂວງ, ຫ້ອງການການຄ້າເມືອງດາກຈຶງ, ສະຫະພັນແມ່ຍິງເມືອງດາກຈຶງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງດາກຈຶງ ລວມທັງຄະນະລິເລີ່ມກະກຽມສ້າງຕັ້ງສະຫະກອນ ແລະ ຕາງໜ້າສະມາຊິກຈາກກຸ່ມຜະລິດກາເຟພູດອຍດາກຈຶງ ແລະ ມີອຳນາດປົກຄອງບ້ານຕົວແທນມາຈາກ 15 ບ້ານ, ຈຳນວນ 44 ທ່ານ, ຍິງ 23 ທ່ານ, ພະນັກງານແຂວງ, ເມືອງ ແລະ ລວມທັງພະນັກງານອົງການແຄຣ໌ ເຂົ້າຮ່ວມ 9 ທ່ານ ຍິງ 3 ທ່ານ, DGRV 1 ທ່ານ, ທີ່ປຶກສາ 1ທ່ານ, ກົມສົ່ງເສີມກະສິກຳ ແລະ ສະກອນ 1 ທ່ານ ແລະ ສະມາຄົມສະຫະກອນ 1 ລວມມີຜູ້ເຂົ້າຮ່ວມ ທັງໝົດ 57 ທ່ານ, ຍິງ 29 ທ່ານ.

ກອງປະຊຸມໄດ້ການລາຍງານ, ປຶກສາຫາຄວາມຄືບໜ້າ ແລະ ການກະກຽມສ້າງສະຫະກອນຊາວສວນກາເຟພູດອຍດາກຈຶງ ເປັນຕົ້ນ: ຮ່າງລະບຽບການຂອງສະຫະກອນ, ເອກະສານສຳຄັນທີ່ກ່ຽວຂ້ອງ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ການລົງທະບຽນເປັນສະມາຊິກ, ການຍື່ນຮ້ອງຂໍການອະນຸມັດຢ່າງເປັນທາງການ ແລະ ການຈັດກອງປະຊຸມສ້າງຕັ້ງສະຫະກອນ.





switchasia Haliéus 4FORM coop International Cooperative Alliance Asia and Pacific ITC FAIRTRADE




## ໂຄງການ SuPER WE Coffee ຈັດກອງປະຊຸມສະຫຼຸບຜົນການຂາຍກາເຟປະຈຳປີ 2024-2025

ໃນຕອນເຊົ້າຂອງວັນທີ 26 ມິຖຸນາ 2025 ທີ່ ສະພາປະຊາຊົນແຂວງ ເຊກອງ ທີມງານໂຄງການ SuPER WE Coffee ໄດ້ຈັດກອງປະຊຸມ ສະຫຼຸບຜົນການຂາຍກາເຟປະຈຳປີ 2024-2025 ໂດຍມີຄູ່ຮ່ວມງານພາກລັດ ຂັ້ນແຂວງ, ຂັ້ນເມືອງ, ຕາງໜ້າຊາວສວນ ຈາກ 15 ບ້ານເປົ້າໝາຍ ໂດຍຕົວເລກລາຍຮັບການຂາຍກາເຟຂອງ 17 ກຸ່ມຜະລິດກາເຟໃນ 15 ບ້ານເປົ້າໝາຍໃນຕົ້ນປີ 2025 ມີປະມານ 34,175,646,175 ກີບ

ໂດຍກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອ ສະຫຼຸບຜົນການຂາຍກາເຟປະຈຳປີ 2024-2025 ໃນກອງປະຊຸມນອກຈາກຈະໄດ້ຮັບຟັງການລາຍງານແລ້ວ ຍັງໄດ້ເຮັດກິດຈະກຳການແຂ່ງຂັນຊີມກາເຟ, ການຫຼິ້ນເກມກ່ຽວກັບການສື່ສານ ແລະ ຄວາມຜູ້ນຳ, ການສະແດງລະຄອນບົດບາດສົມມຸດຂອງຕ່ອງໂສ້ມູນຄ່າເພີ່ມຂອງກາເຟ ຈາກຕົ້ນສູ່ຈອກ ໃນຕອນທ້າຍໄດ້ຮັບຟັງການໂອລົມຈາກຄະນະນຳຄູ່ຮ່ວມງານພາກລັດ ເຊິ່ງເຫັນວ່າ ສຳເລັດລົງຢ່າງຈົບງາມ.



switchasia Halieus 4FORM coop International Cooperative Alliance Asia and Pacific ITC FAIRTRADE



## ມິຖຸນາ

### ໂຄງການ SuPER WE Coffee ຈັດກອງປະຊຸມວາງແຜນການຜະລິດ ແລະ ການຕະຫຼາດ

ໃນຕອນເຊົ້າຂອງວັນທີ 27 ມິຖຸນາ 2025 ທີ່ຫ້ອງປະຊຸມພະແນກສາທາລະນະສຸກ ແຂວງ ເຊກອງ ທີມງານໂຄງການ SuPER WE Coffee ໄດ້ຈັດກອງປະຊຸມ ສະຫຼຸບຜົນການຂາຍກາເຟປະຈຳປີ 2024-2025 ໂດຍມີຄູ່ຮ່ວມງານພາກລັດ ຂັ້ນແຂວງ, ຂັ້ນເມືອງ, ຕາງໜ້າຊາວສວນຈາກ 15 ບ້ານເປົ້າໝາຍ ແລະ ພະນັກງານຈາກອົງການແຄຣ໌.

ໂດຍງກອງປະຊຸມຄັ້ງນີ້ ມີຈຸດປະສົງເພື່ອຮັບຟັງການລາຍງານບັນຫາການຜະລິດກາເຟໃນປີຜ່ານມາ ນອກຈາກນັ້ນຍັງໄດ້ເຮັດກິດຈະກຳກຸ່ມ ສົນທະນາເລື່ອງ ການຕະຫຼາດ, ຍຸດທະສາດຂາຍກາເຟ ແລະ ການບໍລິຫານຄຸ້ມຄອງກຸ່ມ ໃນຕອນທ້າຍທ່ານຈອນ ໄດ້ແນະນຳ ແລະ ໃຫ້ທິດທາງໃນການຊື້-ການຂາຍໃນປີຕໍ່ໄປ ເຊິ່ງເຫັນວ່າ ສຳເລັດລົງຢ່າງຈົບງາມ.








switchasia | Haliéus | 4FORM | coop International Cooperative Alliance Asia and Pacific | ITC | FAIRTRADE



## ມິຖຸນາ

## ໂຄງການ SuPER WE Coffee ຈັດການທັດສະນະແລກປ່ຽນບົດຮຽນ ກ່ຽວກັບການບໍລິຫານຈັດການສະຫະກອນ ທີ່ ສະຫະກອນກາເຟຄຳນ້ຳແປ່ງ, ບ້ານນ້ຳແປ່ງ, ເມືອງ ເລົ່າງາມ, ແຂວງ ສາລະວັນ

ໃນຕອນເຊົ້າຂອງວັນທີ 28 ມິຖຸນາ 2025 ທີ່ບ້ານນ້ຳແປ່ງ ເມືອງ ເລົ່າງາມ ແຂວງ ສາລະວັນ ທີມງານໂຄງການ SuPER WE Coffee ໄດ້ເດີນທາງໄປທັດສະນະແລກປ່ຽນບົດຮຽນກ່ຽວກັບການບໍລິຫານຈັດການສະຫະກອນ ກັບກຸ່ມຜະລິດກາເຟສະຫະກອນກາເຟຄຳນ້ຳແປ່ງ ໂດຍມີຜູ້ເຂົ້າຮ່ວມຕ່າງໜ້າຈາກ ຂັ້ນແຂວງ, ຂັ້ນເມືອງ, ຊາວສວນ, ຕ່າງໜ້າຈາກ ສະຫະກອນກາເຟຄຳນ້ຳແປ່ງ ແລະ ພະນັກງານຈາກອົງການແຄຣ໌

ໂດຍການຢ້ຽມຢາມທັດສະນະແລກປ່ຽນຄັ້ງນີ້ ຖືກເປັນກຽດຕ້ອນຮັບ ໂດຍປະທານສະຫະກອນ ກາເຟຄຳນ້ຳແປ່ງ, ທ່ານ ພູທອນ ສິນທະປະເສີດ ພ້ອມດ້ວຍສະມາຊິກຂອງເພິ່ນ. ໃນນັ້ນ, ການສົນທະນາແລກປ່ຽນໄດ້ກວມເອົາຫົວຂໍ້ສຳຄັນ ທັງໝົດມີ 6 ຫົວຂໍ້ໃນການສົນທະນາ ຄື: ການສ້າງສະຫະກອນ, ໂຄງປະກອບການຈັດຕັ້ງ, ຮູບແບບທຸລະກິດ, ການມີສ່ວນຮ່ວມຂອງສະມາຊິກ, ການແບ່ງປັນຜົນປະໂຫຍດ ແລະ ຄຳແນະນຳສຳລັບສະຫະກອນໃໝ່ ເຊິ່ງຜ່ານການສົນທະນາສາມາດຖອດຖອນບົດຮຽນໄດ້ ເຖິງການບໍລິຫານຈັດການສະຫະກອນ ຕັ້ງແຕ່ການເປັນສະຫະກອນໃໝ່ໆ ມີການວາງແຜນແນວໃດ ແລະ ການຈັດການໃນສະຫະກອນໃນກຸ່ມແນວໃດ ຈຶ່ງມີຜົນໄດ້ຮັບທີ່ດີ.



switchasia Halièus 4FORM coop International Cooperative Alliance Asia and Pacific ITC FAIRTRADE




# ກໍລະກົດ

## ງານເທດສະການກາເຟ ປະເທດໄທ 2025 ການຮ່ວມວາງສະແດງຜະລິດຕະພັນກາເຟຂອງກຸ່ມຜະລິດກາເຟພູດອຍດາກຈຶງ

ແຕ່ວັນທີ 10-13 ກໍລະກົດ 2025, ງານເທດສະການກາເຟໄທ ໄດ້ຈັດພິທີສະເຫຼີມສະຫຼອງຄົບຮອບ 10 ປີ ພາຍໃຕ້ຫົວຂໍ້ "ດື່ມກາເຟໃຫ້ດີຍິ່ງຂຶ້ນ", ດຶງດູດຄົນຮັກກາເຟ, ຜູ້ຊ່ຽວຊານ ແລະ ຜູ້ສ້າງປ່ຽນແປງຈາກທົ່ວອາຊີຕາເວັນອອກ ສຽງໃຕ້. ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ອຳນວຍຄວາມສະດວກໃຫ້ແກ່ການເຂົ້າຮ່ວມຂອງຊາວສວນກາເຟ. ພາຍໃນໂຄງການຈາກ ເມືອງດັກຈຶງ ຮຽນຮູ້ ແລະ ແລກປ່ຽນບົດຮຽນເປັນເວລາ 2 ວັນ, ເຊິ່ງໄດ້ເລີ່ມດ້ວຍການສະຫຼຸບຫຍໍ້ກ່ອນກຳນົດເປົ້າໝາຍທີ່ຈະແຈ້ງ.



ຕະຫຼອດງານດັ່ງກ່າວ, ຊາວກະສິກອນໄດ້ຮ່ວມກັບຜູ້ຜະລິດກາເຟ, ພໍ່ຄ້າຊາວຂາຍ, ເຈົ້າຂອງຮ້ານກາເຟ ແລະ ຜູ້ຊ່ຽວຊານຈາກສະມາຄົມກາເຟພິເສດແຫ່ງປະເທດໄທ (SCATH). ພວກເຂົາເຈົ້າໄດ້ໄປຢ້ຽມ ຢາມສວນກາເຟ ແລະ ໂຄງການລິເລີ່ມທີ່ມີຊື່ສຽງ ເຊັ່ນ: ສວນ ໄຮຕົວກາມີ (Rai Tuaka Mee), ສວນຈາກສວນສູຈອກ (Farm to Cup), ສວນກາເຟດອຍຫວານ (Doiwhan Coffee), ສວນກາເຟຄຸນນ່ານ (KhunNan Coffee), ແລະ ສູນການຮຽນຮູ້ເພື່ອການພັດທະນາ ອອມກອຍ (Omkoi Development Learning Centre) ເພື່ອຮຽນຮູ້ກ່ຽວກັບການເພາະປູກແບບຍືນຍົງ, ການແປຮູບກາເຟພິເສດ ແລະການເຂົ້າເຖິງຕະຫຼາດ.

ນີ້ແມ່ນງານບຸນກາເຟທີ່ໃຫຍ່ທີ່ສຸດໃນອາຊີຕາເວັນອອກສ່ຽງໃຕ້, ເຊິ່ງຈັດຂຶ້ນໂດຍສະມາຄົມກາເຟພິເສດແຫ່ງປະເທດໄທ ໄດ້ນຳເອົາຫຼາຍກວ່າ 200 ຮ້ານທຸລະກິດ ທີ່ກ່ຽວຂ້ອງກັບກາເຟ, ລວມທັງຊາ, ໂກໂກ້, ແລະ ອຸດສາຫະກຳເຂົ້າໜົມປັງ, ມາຈາກ 58 ປະເທດ. ງານດັ່ງກ່າວມີເປົ້າໝາຍເພື່ອສົ່ງເສີມ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ອຸດສາຫະກຳກາເຟໄທໃນທົ່ວລະບົບຕ່ອງໂສ້ມູນຄ່າທັງໝົດ ຕັ້ງແຕ່ຊາວກະສິກອນ ແລະ ຜູ້ປຸງແຕ່ງ ຈົນເຖິງຜູ້ຄົ້ວກາເຟ, ບາຣິສຕ້າ, ແລະ ຜູ້ບໍລິໂພກ ຜ່ານການສຳມະນາ, ການແຂ່ງຂັນ, ແລະກອງປະຊຸມສຳມະນາ ທີ່ສ້າງແຮງບັນດານໃຈໃຫ້ເກີດການເຕີບໂຕແບບຍືນຍົງນີ້.





# ກໍລະກົດ

## ໂຄງການ SuPER WE ຈັດກອງປະຊຸມທົບທວນໄລຍະ 6 ເດືອນຕົ້ນປີ ແລະ ວາງແຜນ 6 ເດືອນທ້າຍປີ ແລະ ລົງການຕິດຕາມກິດຈະກຳຢູ່ບ້ານເປົ້າໝາຍ ພ້ອມດ້ວຍມອບຮັບອຸປະກອນ



ໃນວັນທີ 17-18 ກໍລະກົດ 2025 ທີ່ແຂວງເຊກອງ, ໂຄງການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ຮ່ວມກັບບັນດາຄູ່ຮ່ວມພາກລັດ ແລະ ກຸ່ມຜູ້ຜະລິດກາເຟພູດອຍດາກຈຶງ ໄດ້ຈັດກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດກິດຈະກຳ 6 ເດືອນຕົ້ນປີ ແລະ ແຜນ 6 ເດືອນທ້າຍປີ 2025. ເຊິ່ງເປັນສິ່ງທີ່ໜ້າຍິນດີ ກອງປະຊຸມໄດ້ເຫັນວ່າໃນປີນີ້ຜົນຜະລິດກາເຟຂອງກຸ່ມກາເຟພູດອຍດາກຈຶງ ມີໂຕເລກສູງກວ່າປີທີ່ຜ່ານມາ ມັນສະແດງໃຫ້ເຫັນວ່າ ຊີວິດການເປັນຢູ່ຂອງເຂົາເຈົ້າໄດ້ຮັບການປັບປຸງໃຫ້ດີຂຶ້ນ.

ກ່ອນມື້ຈັດກອງປະຊຸມ, ທາງຄະນະກໍ່ໄດ້ລົງຢ້ຽມຢາມ 2 ບ້ານເປົ້າໝາຍຂອງໂຄງການ ຄື: ບ້ານດາກເອີຍ ແລະ ບ້ານຄູນໄຊ ເພື່ອຕິດຕາມຜົນໄດ້ຮັບຂອງການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການໃນຂັ້ນບ້ານ ພົບປະກັບກຸ່ມຜູ້ຜະລິດການເຟ ແລະ ຮັບຟັງການລາຍງານຈາກປະທານກຸ່ມຜະລິດກາເຟຂອງບ້ານ.



ເພື່ອປະເມີນຄວາມຄືບໜ້າ, ພົບປະກັບກຸ່ມຜູ້ຜະລິດກາເຟ ແລະ ຮັບຟັງການລາຍງານຄວາມຄືບໜ້າ ຈາກຜູ້ນຳຊຸມຊົນ. ໃນຕອນທ້າຍຂອງກິດຈະກຳກໍ່ໄດ້ຢ້ຽມຊົມເຮືອນຕາກກາເຟແບບໃໝ່ ແລະ ສູນອີ້ວຂອງບ້ານດາກເອີຍ-ຄູນໄຊ ພ້ອມທັງໄດ້ມອບຈັກສີກາເຟ ຄັດເກຣດ ໃຫ້ແກ່ບ້ານເປົ້າໝາຍ ເພື່ອສົ່ງເສີມການຜະລິດຂອງເຂົາເຈົ້າໃຫ້ດີຂຶ້ນໄປອີກກ້າວ ແລະ ເພີ່ມມູນຄ່າໃຫ້ແກ່ຜະລິດຕະພັນກາເຟຂອງຊຸມຊົນ. ຜູ້ເຂົ້າຮ່ວມ 28 ທ່ານ, ຍິງ 18 ທ່ານ.




## ກໍລະກິດ

### ໂຄງການ SuPER WE Coffee ກອງປະຊຸມປຶກສາຫາລື ສະຫຼຸບ ຮ່າງກົດລະບຽບຂອງສະຫະກອນ.

ເພື່ອສົ່ງເສີມການຫັນເປັນ/ການສ້າງສະຫະກອນຊາວສວນກາເຟພູດອຍດາກຈຶງ ທາງໂຄງການໄດ້ຈັດ ກອງປະຊຸມໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 30 – 31 ກໍລະກົດ 2025 ຈັດຂຶ້ນທີ່ ສະໂມສອນຫ້ອງວ່າການປົກຄອງເມືອງດາກຈຶງ, ພາຍໃຕ້ເປັນປະທານຂອງ ທ່ານ. ອິນແປງ ວິທະນິງສັກ ຫົວໜ້າສູນສົ່ງເສີເຕັກນິກກະສິກຳ, ມີພາກສ່ວນທີ່ເຂົ້າຮ່ວມ: ຂະແໜງປູກຝັງ (ຜູ້ປະສານງານໂຄງການ), ສູນສົ່ງເສີມເຕັກນິກກະສິກຳ, ພະແນກອຸດສະຫະກຳ ແລະ ການຄ້າ, ສະຫະພັນແມ່ຍິງແຂວງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງດາກຈຶງ, ຫ້ອງການອຸດສະຫະກຳ ແລະ ການຄ້າເມືອງດາກຈຶງ, ສະຫະພັນແມ່ຍິງເມືອງດາກຈຶງ, ພະນັກງານໂຄງການ ແລະ ຕາງໜ້າຊາວສວນປູກກາເຟຈາກ 15 ບ້ານເປົ້າໝາຍຂອງໂຄງການ, ມີຜູ້ເຂົ້າຮ່ວມທັງໝົດຈຳນວນ 53 ທ່ານ, ຍິງ 25 ທ່ານ,ໃນນັ້ນຊາວສວນ 43 ທ່ານ, ຍິງ 21 ທ່ານ.

ຜ່ານກອງປະຊຸມປຶກສາຫາລື-ສະຫຼຸບ ຮ່າງກົດລະບຽບສະຫະກອນກາເຟພູດອຍດາກຈຶງ ແລະ ແຜນດຳເນີນງານ 1 ປີ ຫາ 5 ປີ ແລະ ຄັດເລືອກເອົາຄະນະກະກຽມສ້າງສະຫະກອນ ກາເຟພູດອຍດາກຈຶງ.

ກອງປະຊຸມຈົບລົງດ້ວຍການເຫັນດີ ແລະ ບັນລຸການບ່ອນບັດຄັດເລືອກ ເອົາ 15 ທ່ານ ຕາງໜ້າແຕ່ລະບ້ານເປົ້າໝາຍ ເຂົ້າບັນຈຸໃນຄະນະບໍລິຫານສະກອນຂອງ “ສະຫະກອນກາເຟພູດອຍດາກຈຶງ.



switchasia
Haliéus
4FORM
International Cooperative Alliance Asia and Pacific
ITC
FAIRTRADE



# ສິງຫາ

## ໂຄງການ SuPER WE Coffee ສົ່ງເສີມຊາວສວນກາເຟ ຍິງ ກັບສ້າງຄວາມເຂັ້ມແຂງໃນການເປັນຜູ້ນໍາ.

ໃນວັນທີ  1 ສິງຫາ 2025 ທີມງານ ໂຄງການ SuPER WE Coffee ໄດ້ຈັດກອງປະຊຸມຮ່ວມກັບ ຜູ້ອໍານວຍຄວາມສະດວກຂັ້ນຊຸມຊົນ ທັງ 5 ທ່ານ ໃນນັ້ນແມ່ນ ຍິງ 4 ທ່ານ.

ເພື່ອການຮ່ວມຮັບຟັງນະໂຍບາຍ, ກົດລະບຽບຕ່າງໆ ທີ່ເຂົາເຈົ້າຈະຍຶດໝັ້ນ ໃນການປະຕິບັດໜ້າທີ່ຢ່າງສະເໝີຕົ້ນສະເໝີປາຍ ໃນການປະຕິບັດໜ້າທີ່ ໃນນາມພະນັກງານຂອງອົງການແຄຣ໌ ຊຶ່ງລວມມີ: ຜ່ານຮ່າງສັນຍາບໍລິການ, ພາລະບົດບາດ ແລະ ໜ້າທີ່, ສິດ ແລະ ຜົນປະໂຫຍດ, ຂໍ້ບັງຄັບຕ່າງໆທີ່ຕ້ອງໄດ້ຍຶດໝັ້ນປະຕິບັດ ເຊັ່ນ: ການສໍ້ໂກງ, ການລ່ວງລະເມີດທາງເພດ ໂດຍສະເພາະເດັກນ້ອຍຍິງ ແລະ ໃຊ້ສວຍພາລະບົດບາດໃນການເອົາລັກເອົາປຽບຜູ້ອື່ນ ແລະ ອື່ນໆ.

ຊຶ່ງພາຍຫຼັກຜ່ານຮ່າງສັນຍາ ແລະ ບັນດາກົດລະບຽບ, ສິດ ແລະ ພັນທະຕ່າງໆສໍາເລັດແລ້ວ ຈຶ່ງໄດ້ມີການລົງນາມເຊັນສັນຍາ ໃນການເປັນຜູ້ໃຫ້ບໍລິການນ ຜູ້ອໍານວຍຄວາມສະດວກຂັ້ນຊຸມຊົນ  ເປັນໂອກາດສໍາຄັນໃນການເຮັດວຽກຮ່ວມກັນພາຍໃຕ້ ອຸດົມການດຽວກັນ ອີກຢ່າງ ຍັງເປັນການສົ່ງເສີມທັກສະ ການເຮັດວຽກ ແລະ ການເປັນຜູ້ນໍາ ຂອງຊາວສວນຍິງອີກດ້ວຍ.






## ໂຄງການ SuperWE Coffee ໄດ້ມອບເຄື່ອງເຮັດກາເຟໃຫ້ແກ່ຊາວກະສິກອນກາເຟຢູ່ເມືອງດາກຈຶງ



ສຳເລັດການລົງມອບຮັບຈັກສີກາເຟຂະໜາດກາງ ໃຫ້ແກ່ບ້ານ ດາກເອີຍ, ຄູນໄຊ, ດາກວໍ ແລະ ບ້ານ ດາກຣາຍ ແລະ ໄດ້ມອບພາເລດຢາງຮອງໃຫ້ແກ່ 3 ບ້ານເປົ້າໝາຍ (ດາກວໍ, ດາກວາງ, ດາກຣາຍ) ໃນວັນທີ 7 ແລະ 9 ສິງຫາ 2025 ຕາມລຳດັບ ໂດຍສົມທົບກັບທີມງານໂຄງການ ແລະ ຄູ່ຮ່ວມງານພາກລັດ.

ຈຸດປະສົງກໍ່ເພື່ອຊ່ວຍຊາວໃນການປະຢັດແຮງງານ, ຜະລິດກາເຟໃຫ້ໄດ້ຄຸນນະພາບ ເພື່ອສົ່ງອອກ ພ້ອມດຽວກັນນັ້ນຍັງໄດ້ອະທິບາຍວິທີການນຳໃຊ້ ແລະ ວິທີດູແລຮັກສາເຄື່ອງ ໃຫ້ນຳໃຊ້ໄດ້ຢ່າງມີປະສິດທິພາບ.

ສິງຫາ

## ໂຄງການ SuPER WE Coffee ຈັດກອງປະຊຸມປະຈຳເດືອນ ຂັ້ນວິຊາການ



ໃນວັນທີ 22 ສິງຫາ 2025 ທາງໂຄງການ ແລະ ຄູ່ຮ່ວມງານທາງພາກລັດ ທາງຂັ້ນແຂວງ ແລະ ຂັ້ນເມືອງ ໂດຍມີຜູ້ເຂົ້າຮ່ວມທັງໝົດ15 ທ່ານ ແລະ ຍິງ 7 ທ່ານ, ຈຸດປະສົງຂອງການປະຊຸມ ເພື່ອທົບທວນຄືນຜົນໄດ້ຮັບໃນການຈັດຕັ້ງປະຕິບັດກິດຈະກຳ 3 ເດືອນຜ່ານມາ ພ້ອມດ້ວຍຊອກຫາວິທີແກ້ໄຂ ບັນຫາ ແລະ ຂໍ້ຄົງຄ້າງທີ່ຜ່ານມາ ເພື່ອໃຫ້ບັນຫາດັ່ງກ່າວມີການແກ້ໄຂໄປໃນທາງທີ່ຖືກຕ້ອງ.

ພ້ອມດຽວກັນນັ້ນ ຍັງໄດ້ວາງແຜນກິດຈະກຳຮ່ວມກັນກັບເພື່ອນຮ່ວມງານທາງພາກລັດ ຂັ້ນແຂວງ ແລະ ຂັ້ນເມືອງ ໃນເດືອນຕໍ່ໄປ ເຮັດໃຫ້ກິດຈະກຳດັ່ງກ່າວນຳໄປຈັດຕັ້ງປະຕິບັດໃຫ້ແທດເໝາະກັບສະພາບຕົວຈິງ.

switchasia Haliéus 4FORM coop International Cooperative Alliance Asia and Pacific ITC FAIRTRADE




# ສິງຫາ

## ໂຄງການ SuPER WE Coffee ຈັດຝຶກອົບຮົມໃຫ້ຄະນະກະກຽມສ້າງສະຫະກອນກາເຟພູດອຍດາກຈຶງ

ໃນວັນທີ 26 ຫາ 28 ເດືອນ ສິງຫາ ປີ 2025 ທາງໂຄງການ SuPER WE Coffee ໂດຍຮ່ວມມືກັບກົມສົ່ງເສີມກະສິກໍາ ແລະ ສະຫະກອນຂັ້ນສູນກາງ, ຈັດຝຶກອົບຮົມການສ້າງສະຫະກອນກາເຟພູດອຍດາກຈຶງໃຫ້ແກ່ຄະນະກະກຽມການສ້າງສະຫາກອນກາເຟພູດອຍດາກຈຶງໂດຍມີຜູ້ເຂົ້າຮ່ວມຈາກໂຄງການ, ກົມສົ່ງເສີມກະສິກໍາ ແລະ ສະຫະ ກອນ ພ້ອມດ້ວຍຄູ່ຮ່ວມງານທາງພາກລັດຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຕົວແທນຈາກ 15 ບ້ານເປົ້າໝາຍຂອງໂຄງການເຂົ້າຮ່ວມ.



ໂດຍມີຈຸດປະສົງ ເພື່ອເສີມສ້າງຄວາມຮູ້ ແລະ ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບຫຼັກການ ແລະ ແນວທາງການບໍລິຫານສະຫະກອນ, ພ້ອມທັງຝຶກທັກສະດ້ານການຈັດຕັ້ງ ແລະ ການບໍຫານຈັດການ ໃຫ້ສະຫະກອນດໍາເນີນງານໄດ້ຢ່າງໂປ່ງໃສ, ມີສ່ວນຮ່ວມ ແລະ ຍືນຍົງ ມີຜູ້ເຂົ້າຮ່ວມ 30 ທ່ານ, ຍິງ 12 ທ່ານ.

ໃນຕອນທ້າຍຂອງການຝຶກອົມຮົມ ທາງກົມສົ່ງເສີມກະສິກໍາ ແລະ ສະຫະກອນຍັງໄດ້ມອບໃບຢັ້ງຢືນເພື່ອເປັນການກະຕຸ້ນໃຫ້ກໍາລັງໃຈໃຫ້ນັກສໍາມະນາກອນຈາກບ້ານໝາຍ ແລະ ເປັນຫຼັກຖານໃນການດໍາເນີນງານຂັບເຄື່ອນການສ້າງສະຫະກອນກາເຟພູດອຍດາກຈຶງ.





# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານເສດຖະກິດໃຫ້ແກ່ແມ່ຍິງ

**ບັນທຶກ ແລະ ສໍາພາດໂດຍ : ເກດເກສອນ ດວງມີນາ**



ແກ້ວນາວັນ ແມ່ນຜູ້ຊ້າຍມື

ທ່ານ ນາງ ເພັດສະໝັນ ສີລາພອນ ໜຶ່ງໃນຜູ້ເຂົ້າຮ່ວມງານ Thailand Coffee Fest 2025 ກ່າວວ່າ *"ທີ່ງານ Thailand Coffee Fest ພວກເຮົາບໍ່ແມ່ນພຽງໄດ້ແຕ່ດື່ມກາເຟ, ແຕ່ພວກເຮົາໄດ້ຮຽນຮູ້ຄຸນຄ່າຂອງກາເຟພິເສດ ແລະ ພະລັງຂອງການປູກກາເຟໃນຮົ່ມໄມ້".*

ພວກເຮົາໄດ້ເຫັນແນວໂນ້ມໃໝ່ ວິທີເລົ່າເລື່ອງລາວຂອງແບຣນ ແລະ ໂອ ກາດທີ່ຈະເຊື່ອມຕໍ່ກັບຄົນໃນວົງການ. ພວກເຮົາກັບມາພ້ອມແຮງບັນດານໃຈ ເພື່ອນໍາກາເຟລາວຈາກພູດອຍດາກຈຶ່ງໄປສູ່ເວທີລະດັບສາກົນ.



ເພັດສະໝັນແມ່ນຜູ້ທີ່ສາມ ນັບຈາກຊ້າຍໄປຂວາມື

ເຊັ່ນດຽວກັນກັບ ແກ້ວນາວັນ ໄຊຍະອາວ ສະມາຊິກຊາວສວນຈາກບ້ານດາກຢອຍ ກໍໄດ້ກ່າວເພີ່ມຕື່ມວ່າ *"ການໄດ້ເຂົ້າຮ່ວມງານ Thailand Coffee Fest 2025 ແມ່ນປະສົບການທີ່ມີຄ່າຫຼາຍສໍາລັບພວກເຮົາ. ໃນຖານະທີ່ເປັນຊາວສວນກາເຟ, ການໄດ້ເຫັນຜູ້ຄົນຈາກຫຼາຍປະເທດທັງຜູ້ປະກອບການ, ຜູ້ຊື້ກາເຟ, ນັກຊີມ ແລະ ຜູ້ບໍລິໂພກ ມາພົບກັນໃນງານກາເຟດັ່ງກ່າວ ໄດ້ເຮັດໃຫ້ພວກເຮົາຮູ້ສຶກພາກພູມໃຈໃນສິ່ງທີ່ພວກເຮົາໄດ້ປູກ ແລະ ດູແລມາຕັ້ງແຕ່ຕົ້ນຈົນສູ່ຈອກ".*

## ຕິດຕໍ່ພວກເຮົາໄດ້ທີ່:

**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**
ຫົວໜ້າ ອົງການ
ເບີໂທ: (+856) 20 5564 2235
ອີເມລ: keoamphone.souvannaphoum@care.org

**ທ່ານ ສົງ ຈັນທະວົງສາ**
ວ່າການຫົວໜ້າ ຫ້ອງການແຂວງ ເຊກອງ
ເບີໂທ: (+856) 20 5509 4404
ອີເມລ: song.chanthavongsa@care.org

**ທ່ານ ລີໄຊ ໂພທິສັດ**
ຜູ້ປະສານງານດ້ານການສື່ສານ
ເບີໂທ: (+856) 20 7777 9501
ອີເມລ: Lyxay.phothisut@care.org


ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ
ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ ເບີໂທ (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org | www.careint.org.la | @careinlaos | CARE International in Lao PDR


care®